# ແບບຟອມລົງທະບຽນນຳໃຊ້ບໍລິການ BCEL SMS Banking

ຊື່ ແລະ ນາມສະກຸນ : ..........................................................................................................

ໂທລະສັບຕັ້ງໂຕະ/ມືຖື ..........................................................................................................

ອີເມລ໌ ..........................................................................................................

☐ **ສົ່ງຂໍ້ຄວາມແຈ້ງເຕືອນການເຄື່ອນໄຫວບັນຊີ:**

| ລະຫັດ | ເລກບັນຊີ | ຊື່ເລກບັນຊີ | ເບີໂທຮັບຂໍ້ຄວາມແຈ້ງເຕືອນ |
|---|---|---|---|
| AC1 | | | |
| AC2 | | | |
| AC3 | | | |
| AC4 | | | |
| AC5 | | | |

☐ **ຫັກຄ່າທຳນຽມທັງໝົດໃນບັນຊີດຽວ:**

- ລະບຸເລກບັນຊີ: ..........................................................................

☐ **ສົ່ງອັດຕາແລກປ່ຽນປະຈຳວັນ:**

| ເບີໂທແຈ້ງອັດຕາແລກປ່ຽນ | ເລກບັນຊີຊຳລະຄ່າທຳນຽມລາຍເດືອນ | ຊື່ບັນຊີ |
|---|---|---|
| | | |
| | | |
| | | |

ຂໍ້ມູນທັງໝົດທີ່ຂ້າພະເຈົ້າໃຫ້ໄວ້ໃນນີ້ເປັນຂໍ້ມູນທີ່ຖືກຕ້ອງ, ຄົບຖ້ວນ ແລະ ເປັນຄວາມຈິງທຸກປະການ ຂ້າພະເຈົ້າໄດ້ອ່ານ, ເຂົ້າໃຈເປັນທີ່ຮຽບຮ້ອຍ ແລະ ຕົກລົງຍິນຍອມປະຕິບັດຕາມ ເງື່ອນໄຂ ແລະ ຂໍ້ຜູກພັນການໃຊ້ບໍລິການ SMS Banking ທີ່ແນບກັບແບບຟອມສະໝັກນີ້ ຈຶ່ງໄດ້ລົງລາຍເຊັນໄວ້ເພື່ອເປັນຫຼັກຖານທາງກົດໝາຍ.

| (ສຳລັບ ທຄຕລ) ຫົວໜ້າຂະແໜງ / ຜູ້ອະນຸມັດ *(ເຊັນ ແລະ ຊື່ແຈ້ງ):* | (ສຳລັບ ທຄຕລ) ພະນັກງານຜູ້ລົງທະບຽນ *(ເຊັນ, ຈ້ຳກາກວດລາຍເຊັນ ແລະ ຊື່ແຈ້ງ):* | **ລາຍເຊັນເຈົ້າຂອງບັນຊີ** *(ເຊັນ, ຊື່ແຈ້ງ ແລະ ກາປະທັບ (ຖ້າມີ))* |
|---|---|---|
| | | ວັນທີ.......... ເດືອນ......... ປີ............... |

| ເອກະສານຕິດຄັດ: | (For BCEL) ຜູ້ຮັບຟອມສະໝັກ | (For BCEL) ແຈ້ງຜົນລົງທະບຽນ |
|---|---|---|
| 1. ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືເດີນທາງ ຂອງເຈົ້າຂອງບັນຊີ — ຈຳນວນ 1 ຊຸດ<br>2. ໃບມອບສິດໃຫ້ຜູ້ມາຍື່ນເອກະສານແທນ ກໍລະນີເຈົ້າຂອງບັນຊີບໍ່ໄດ້ມາຍື່ນດ້ວຍຕົວເອງ — ຈຳນວນ 1 ຊຸດ | ຊື່ແຈ້ງ ........................ BCEL ............ | ☐ ສຳເລັດແລ້ວ |

# ເງື່ອນໄຂ ແລະ ຂໍ້ຜູກພັນໃນການນຳໃຊ້ບໍລິການ SMS Banking ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

**ມາດຕາ 1: ອະທິບາຍຄຳສັບ**

1.1. ທຄຕລ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

1.2. ຜູ້ນຳໃຊ້: ບຸກຄົນ ຫຼື ນິຕິບຸກຄົນ ທີ່ເປີດບັນຊີຢູ່ ທຄຕລ ແລະ ໄດ້ລົງທະບຽນນຳໃຊ້ບໍລິການ SMS Banking ຂອງ ທຄຕລ.

1.3. SMS Banking: ເປັນບໍລິການທີ່ໃຫ້ລູກຄ້າສາມາດນຳໃຊ້ບໍລິການຕ່າງໆຂອງ ທຄຕລ ທີ່ໄດ້ລົງທະບຽນໄວ້ ຜ່ານທາງຂໍ້ຄວາມສັ້ນ.

1.4. ເຈົ້າຂອງບັນຊີ: ຜູ້ທີ່ມີສິດໃນສັ່ງຈ່າຍ, ຄຸ້ມຄອງ, ນຳໃຊ້ບັນຊີ ຕາມກົດລະບຽບຂອງທະນາຄານ ແລະ ກົດໝາຍ ສປປ ລາວ.

**ມາດຕາ 2: ເງື່ອນໄຂພື້ນຖານຂອງຜູ້ນຳໃຊ້ກ່ອນສະໝັກ**

2.1. ຕ້ອງມີບັນຊີເງິນຝາກ ປະເພດ ຝາກປະຫຍັດ ຫຼື ກະແສລາຍວັນ ນຳທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

2.2. ຜູ້ສະໝັກຕ້ອງມີໂທລະສັບມືຖືລຸ້ນທີ່ສາມາດຮອງຮັບການຮັບສົ່ງຂໍ້ຄວາມສັ້ນ (SMS) ທີ່ຮອງຮັບເບີ 1444 ແລະ ມີເບີໂທລະສັບມືຖືເປັນກຳມະສິດຂອງຕົນເອງ.

2.3. ຜູ້ສະໝັກຕ້ອງລະບຸເບີໂທລະສັບຮັບສົ່ງຂໍ້ຄວາມສັ້ນ (SMS), ເບີໂທລະສັບຕັ້ງໂຕະ/ມືຖື ແລະ ທີ່ຢູ່ອີເມວຂອງຕົນ (ຖ້າມີ) ເພື່ອເປັນຊ່ອງທາງໃຫ້ທະນາຄານສາມາດຕິດຕໍ່ຫາໄດ້.

2.4. ປະກອບຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງຕາມແບບຟອມ ເພື່ອລົງທະບຽນນຳໃຊ້ບໍລິການ SMS Banking ຜ່ານປ່ອງບໍລິການ ທຄຕລ ຫຼື ຜ່ານຊ່ອງທາງອອນລາຍ ດ້ວຍລະບົບລົງທະບຽນນຳໃຊ້ ຫຼື ພາຍໃນຜະລິດຕະພັນອອນລາຍ ຂອງ ທຄຕລ.

**ມາດຕາ 3: ບໍລິການ ແລະ ຂອບເຂດການໃຫ້ບໍລິການ**

3.1. ບໍລິການແຈ້ງເຕືອນການເຄື່ອນໄຫວບັນຊີ: ເມື່ອມີການເຄື່ອນໄຫວບັນຊີລະບົບຈະສົ່ງຍອດຍົກມາ, ຍອດທີ່ເຄື່ອນໄຫວ ແລະ ຍອດເຫຼືອໃຫ້ຜູ້ນຳໃຊ້ທັນທີ.

3.2. ບໍລິການສົ່ງອັດຕາແລກປ່ຽນ: ໃນລະຫວ່າງ 9-11 ໂມງ ຂອງທຸກໆ ວັນລັດຖະການ ລະບົບຈະສົ່ງອັດຕາແລກປ່ຽນເງິນສົດ ແລະ ອັດຕາໂອນຜ່ານບັນຊີ ສຳລັບ ສະກຸນເງິນ ບາດ ແລະ ໂດລາ ໃຫ້ລູກຄ້າ.

**ມາດຕາ 4: ວ່າດ້ວຍຜູ້ນຳໃຊ້**

ຜູ້ນຳໃຊ້ບໍລິການຮັບຊາບ, ຍອມຮັບ ແລະຕົກລົງກັບທະນາຄານດັ່ງນີ້:

4.1. ຜູ້ນຳໃຊ້ຮັບປະກັນວ່າ ຕົນເອງມີສິດ ຫຼື ໄດ້ຮັບມອບສິດຈາກເຈົ້າຂອງບັນຊີ ໃນການນຳບັນຊີດັ່ງກ່າວມາລົງທະບຽນເພື່ອຮັບບໍລິການ SMS Banking ຈາກທະນາຄານ ແລະ ຈະຮັກສາຄວາມລັບທາງການເງິນໃນຂໍ້ຄວາມໄວ້ເປັນຄວາມລັບຂອງຜູ້ນຳໃຊ້.

4.2. ກໍລະນີຕ້ອງການ ປ່ຽນແປງ, ຍົກເລີກບໍລິການ ຫຼື ນຳໃຊ້ຄືນໃໝ່ ລູກຄ້າຕ້ອງປະກອບເອກະສານໃສ່ຟອມປ່ຽນແປງການນຳໃຊ້ບໍລິການ SMS Banking ທີ່ທະນາຄານວາງອອກເທົ່ານັ້ນ ແລະ ສາມາດເຂົ້າມາຍື່ນຟອມໄດ້ທີ່ບັນດາສາຂາ ຫຼື ໜ່ວຍບໍລິການຂອງ ທຄຕລ ໃກ້ບ້ານທ່ານ.

4.3. ກໍລະນີລົງທະບຽນໄປແລ້ວນຳໃຊ້ບໍ່ໄດ້ ຫຼື ບໍ່ໄດ້ຮັບຂໍ້ຄວາມຕອບຮັບ, ບໍ່ໄດ້ຮັບຂໍ້ຄວາມການເຄື່ອນໄຫວບັນຊີ, ອັດຕາແລກປ່ຽນ, ໃຫ້ພົວພັນຫາທະນາຄານ ພາຍໃນ 3 ມື້ລັດຖະການຫຼັງຈາກມື້ຍື່ນຟອມສະໝັກ/ປ່ຽນແປງຂໍ້ມູນການນຳໃຊ້ຜະລິດຕະພັນ.

4.4. ກໍລະນີສົ່ງຂໍ້ຄວາມສອບຖາມ/ສະໝັກແພັກເກັດໄປແລ້ວ ແຕ່ລະບົບບໍ່ແຈ້ງຕອບພົນພາຍໃນ 2 ນາທີໃຫ້ໂທຫາສາຍດ່ວນ 1555 ເພື່ອແຈ້ງເຫດໃຫ້ທະນາຄານ ກວດກາ ແລະ ລາຍງານຜົນ ຫຼື ແກ້ໄຂ.

4.5. ຜູ້ນຳໃຊ້ຍອມຮັບ ແລະ ຍິນຍອມ ຕໍ່ການປ່ຽນແປງ ຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ໂດຍທະນາຄານຈະແຈ້ງໃຫ້ຮູ້ລ່ວງໜ້າ ຫຼື ປະກາດຢູ່ ເວັບໄຊຂອງທະນາຄານ.

4.6. ຜູ້ນຳໃຊ້ຍອມຮັບຕໍ່ກັບຄ່າທຳນຽມຕ່າງໆໃນການນຳໃຊ້ບໍລິການຜະລິດຕະພັນ SMS Banking ແລະ ການປັບປຸງອັດຕາຄ່າທຳນຽມ ຕາມແຕ່ລະໄລຍະ ໂດຍອະນຸຍາດໃຫ້ຕັດຄ່າທຳນຽມຈາກບັນຊີຂອງຜູ້ນຳໃຊ້ ໂດຍອັດຕະໂນມັດ ຕາມຮອບວຽນຂອງການເກັບຄ່າທຳນຽມ ຫຼື ໃນທຸກຄັ້ງທີ່ໄດ້ຮັບການບໍລິການໄດ້ ໂດຍບໍ່ມີຂໍ້ໂຕ້ແຍ່ງ.

4.7. ໃນກໍລະນີທີ່ບໍ່ສາມາດຫັກຄ່າທຳນຽມຈາກບັນຊີຂອງຜູ້ນຳໃຊ້ໄດ້ ລວມກັນ 3 ເດືອນ ແຕ່ບໍ່ເກີນ 6 ເດືອນ, ທະນາຄານຈະຢຸດການໃຫ້ບໍລິການເປັນການຊົ່ວຄາວໃນທັນທີ ແລະ ສືບຕໍ່ຫັກຄ້າງ ຄ່າທຳນຽມບໍລິການລາຍເດືອນຕໍ່ໄປຈົນກວ່າຈະຄົບ ລະບົບຈະເປີດນຳໃຊ້ຄືນແບບອັດຕະໂນມັດໃນມື້ຖັດໄປ. ກໍລະນີບໍ່ສາມາດເກັບຄ່າທຳນຽມໄດ້ເຖິງ 6 ເດືອນ, ທະນາຄານຈະຢຸດການໃຫ້ບໍລິການເປັນການຖາວອນ ແຕ່ຄ່າທຳນຽມທີ່ຄ້າງ ຈະຍັງຄົງຮັກສາໄວ້ເພື່ອລໍຖ້າຊຳລະໃຫ້ຄົບຖ້ວນ.

4.8. ກໍລະນີຜູ້ໃຊ້ບໍລິການຍົກເລີກການໃຊ້ເບີມືຖືທີ່ລົງທະບຽນນຳໃຊ້ບໍລິການ SMS Banking ໂດຍບໍ່ແຈ້ງຈຸດປະສົງກັບທະນາຄານເຊັ່ນ: ປ່ຽນແປງເບີໂທຮັບຂໍ້ມູນການໃຊ້ບໍລິການ SMS Banking, ປິດການໃຊ້ບໍລິການຊົ່ວຄາວ ຫຼື ປິດການໃຊ້ບໍລິການຖາວອນ ເຊິ່ງມີບຸກຄົນອື່ນ ແຈ້ງ ຫຼື ອ້າງສິດຄວາມເປັນເຈົ້າຂອງເບີໂທດັ່ງກ່າວ (ປ່ຽນມືຜູ້ຖືຄອງເບີໂທລະສັບ), ທະນາຄານຈະຢຸດການໃຫ້ບໍລິການເປັນການຊົ່ວຄາວຫຼັງຈາກໄດ້ຮັບການຢັ້ງຢືນຕົວຕົນຂອງບຸກຄົນທີ່ອ້າງສິດດັ່ງກ່າວຕາມຮູບແບບທີ່ ທຄຕລ ກຳນົດ.

4.9. ຜູ້ໃຊ້ບໍລິການຮັບຊາບວ່າ ສະເພາະການສົ່ງຂໍ້ຄວາມສອບຖາມ ແລະ ສະໝັກແພັກເກັດ ທີ່ສົ່ງເຂົ້າມາຫາລະບົບທະນາຄານ ແມ່ນຜູ້ໃຊ້ບໍລິການ ຕ້ອງໄດ້ຮັບຜິດຊອບຄ່າໃຊ້ຈ່າຍຄ່າຂໍ້ຄວາມດັ່ງກ່າວເອງກັບຜູ້ໃຫ້ບໍລິການເຄືອຂ່າຍໂທລະສັບ, ບໍ່ຂຶ້ນກັບທະນາຄານ.

**ມາດຕາ 5: ສິດທິ ແລະຄວາມຮັບຜິດຊອບຂອງຜູ້ນຳໃຊ້**

5.1. ຮ້ອງຮຽນກ່ຽວກັບຄວາມຜິດພາດ, ຜິດລະບຽບ ທີ່ໄດ້ເກີດຂຶ້ນຢູ່ພາຍໃຕ້ຄວາມຮັບຜິດຊອບໃນການໃຫ້ບໍລິການຂອງ ທຄຕລ ຕ້ອງໄດ້ເຮັດເປັນໜັງສືຮ້ອງຮຽນ ແລະ ຄັດແນບກັບເອກະສານອ້າງອີງຕ່າງໆ (ຖ້າມີ) ແລ້ວສົ່ງໃຫ້ ທຄຕລ ພາຍໃນ 07 ວັນລັດຖະການນັບແຕ່ມື້ທີ່ ສິດທິ ແລະ ຜົນປະໂຫຍດຂອງຜູ້ນຳໃຊ້ໄດ້ຮັບຜົນກະທົບ, ຖ້າເກີນກຳນົດເວລາດັ່ງກ່າວທາງ ທຄຕລ ຈະບໍ່ຮັບຜິດຊອບໃນການແກ້ໄຂ. ໃນກໍລະນີການຮ້ອງຮຽນດັ່ງ ກ່າວບໍ່ຢູ່ໃນຄວາມຮັບຜິດຊອບຂອງ ທຄຕລ ຜູ້ຮ້ອງຮຽນຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂຶ້ນຈາກ ການແກ້ໄຂການຮ້ອງຮຽນດັ່ງກ່າວຕາມລະ ບຽບ ຂອງ ທຄຕລ.

5.2. ຜູ້ນຳໃຊ້ ຕ້ອງຮັບປະກັນເບີໂທສັບຂອງຕົນເອງ ບໍ່ໃຫ້ຕົກເຮ່ຍເສຍຫາຍ, ຖືກປອມແປງຂຶ້ນມາ ຫຼື ຖືກປິດການນຳໃຊ້ບໍລິການໂດຍໂທລະຄົມ. ຖ້າຫາກເກີດເຫດການດັ່ງກ່າວ, ຜູ້ນຳໃຊ້ ຕ້ອງແຈ້ງມາຫາທະນາຄານທັນທີ ຢ່າງເປັນລາຍລັກອັກສອນ ເພື່ອຢຸດການໃຊ້ບໍລິການ.

5.3. ເມື່ອພົບເຫັນກໍລະນີຕ້ອງສົງໃສ ຕ້ອງກວດສອບກັບ ທຄຕລ ກ່ອນນຳໃຊ້ ຕາມໝາຍເລກຕິດຕໍ່ ສາຍດ່ວນ 1555 ຫຼື ອີເມວ e-banking@bcel.com.la

**ມາດຕາ 6: ການສະໝັກແພັກເກັດທີ່ບໍ່ສຳເລັດ**

ຜູ້ນຳໃຊ້ບໍລິການຮັບຊາບວ່າ ລາຍການສະໝັກແພັກເກັດ ຂອງຜູ້ນຳໃຊ້ທີ່ສ້າງຂຶ້ນ ຈະບໍ່ສຳເລັດ ແລະ ລາຍການຈະຖືກຍົກເລີກໂດຍອັດຕະໂນມັດໃນກໍລະນີເຊັ່ນ: ຍອດເງິນທີ່ໃຊ້ໄດ້ໃນບັນຊີຕົ້ນທາງ ບໍ່ພຽງພໍ ທີ່ຈະຕັດຄ່າທຳນຽມສະໝັກແພັກເກັດ, ເຫດຂັດຂ້ອງໃນການເຊື່ອມຕໍ່ສັນຍານໂທລະສັບ ຕິດຂັດ ຫຼື ໂທລະສັບມີບັນຫາ.

**ມາດຕາ 7: ສິດທິ ແລະຄວາມຮັບຜິດຊອບຂອງ ທຄຕລ**

7.1. ກຳນົດ ຫຼື ປ່ຽນແປງອັດຕາຄ່າທຳນຽມໃນການໃຊ້ບໍລິການ ຜະລິດຕະພັນຕ່າງໆ ຕາມຄວາມເໝາະສົມຂອງແຕ່ລະໄລຍະ.

7.2. ທຄຕລ ຈະປະຕິບັດການລົງທະບຽນ ຫຼື ປ່ຽນແປງຂໍ້ມູນ ຕາມຟອມສະໝັກ/ແບບຟອມປ່ຽນແປງການນຳໃຊ້ ຈາກລູກຄ້າ.

7.3. ໃນກໍລະນີມີການບຳລຸງຮັກສາລະບົບ, ຍົກລະດັບລະບົບ ທະນາຄານມີສິດຢຸດການນຳໃຊ້ຂອງລູກຄ້າຊົ່ວຄາວ.

7.4. ການໃຫ້ບໍລິການອາດຈະຖືກຢຸດທັນທີ ພາຍຫຼັງທີ່ທະນາຄານໄດ້ກວດພົບວ່າຜູ້ນຳໃຊ້ບໍລິການບໍ່ປະຕິບັດຕາມເງື່ອນໄຂ ແລະຂໍ້ກຳນົດທີ່ໄດ້ຕົກລົງກັນ.

7.5. ຮັບປະກັນຜົນປະໂຫຍດສູງສຸດຂອງລູກຄ້າ ຕາມຂໍ້ກຳນົດ ແລະ ເງື່ອນໄຂໃນການໃຊ້ບໍລິການ SMS Banking ຂອງ ທຄຕລ.

7.6. ເກັບຂໍ້ມູນທີ່ກ່ຽວຂອ້ງກັບລູກຄ້າໄວ້ເປັນຄວາມລັບເຊັ່ນ: ຂໍ້ມູນບັນຊີ, ຂໍ້ມູນການເຄື່ອນໄຫວ ເປັນຄວາມລັບຕາມລະບຽບການຂອງ ທຄຕລ.

7.7. ແກ້ໄຂການຮ້ອງຮຽນຕ່າງໆ ຕາມມາດຕາ 5.1.

7.8. ທະນາຄານຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກຄວາມລ່າຊ້າໃນການແຈ້ງບັນຫາ ແລະ ຈາກຄວາມຂັດຂ້ອງທີ່ເກີດຂຶ້ນຈາກລະບົບຕິດຕໍ່ສື່ສານ, ອຸປະກອນສື່ສານຂອງຜູ້ໃຊ້ບໍລິການເອງ, ໂປຼແກມຮັບສົ່ງຂໍ້ຄວາມ ຂອງຜູ້ໃຊ້ບໍລິການ ຫຼື ຂອງຜູ້ໃຫ້ບໍລິການເຄືອຂ່າຍໂທລະສັບ; ລະບົບໄຟຟ້າ; ຫຼື ການປິດລະບົບຊົ່ວຄາວເພື່ອບຳລຸງຮັກສາ ອັນເປັນເຫດ ໃຫ້ຜູ້ນຳໃຊ້ບໍລິການຊັກຊ້າ, ບໍ່ສາມາດໃຊ້ໄດ້ ຫຼື ຜົນປະໂຫຍດຖືກກະທົບຈົນເກີດຄວາມເສຍຫາຍ.

**ມາດຕາ 8: ກົດໝາຍອ້າງອີງກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ**

ເງື່ອນໄຂ ແລະ ຂໍ້ຜູກພັນໃນການໃຊ້ບໍລິການ SMS Banking ຂອງ ທຄຕລ ສະບັບນີ້ໄດ້ຮັບການຄຸ້ມຄອງຈາກກົດໝາຍ ສປປ ລາວ. ຖ້າເນື້ອໃນໃດໜຶ່ງໃນເງື່ອນໄຂການນຳໃຊ້ບໍລິການ SMS Banking ສະບັບນີ້ ມີຂໍ້ຂັດແຍ່ງ ຫຼື ຂັດກັບຂໍ້ກຳນົດຂອງກົດໝາຍ, ຈະຖືວ່າເປັນຂໍ້ກຳນົດທີ່ເປັນໂມຄະບາງສ່ວນເທົ່ານັ້ນ, ເນື້ອໃນ ຫຼື ຂໍ້ກຳນົດສ່ວນອື່ນຈະຍັງມີຜົນບັງຄັບໃຊ້ຢູ່.

ໃນກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນຈາກການໃຫ້ບໍລິການ ແລະ ການນຳໃຊ້ SMS Banking ລະຫວ່າງຜູ້ນຳໃຊ້ບໍລິການ ກັບ ທຄຕລ, ການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ, ກ່ອນອື່ນໝົດ ຈະຕ້ອງໄດ້ຮັບການແກ້ໄຂດ້ວຍການໄກ່ເກ່ຍ. ກໍລະນີບໍ່ສາມາດໄກ່ເກ່ຍກັນໄດ້, ຝ່າຍກ່ຽວຂ້ອງສາມາດຟ້ອງຮ້ອງ ຕາມລະບົບຍຸຕິທຳແຫ່ງ ສປປ ລາວ. ຖ້າຫາກລູກຄ້າບໍ່ທັນເຂົ້າໃຈບາງເນື້ອໃນ ຫຼື ເງື່ອນໄຂ ຄວນສອບຖາມນຳພະນັກງານ ທຄຕລ ເພື່ອຂໍຄຳອະທິບາຍກະຈ່າງແຈ້ງ.

**ມາດຕາ 9: ບັນຫາຕົກລົງກັນອື່ນໆ ແລະ ການປະຕິບັດ**

ເງື່ອນໄຂ ແລະ ຂໍ້ຜູກພັນໃນການໃຊ້ບໍລິການ SMS Banking ທີ່ອອກໂດຍ ທຄຕລ ພ້ອມກັບເອກະສານຕິດຂັດທີ່ກ່ຽວຂ້ອງ ຖືວ່າເປັນສ່ວນໜຶ່ງທີ່ບໍ່ສາມາດແຍກອອກຈາກກັນ. ລູກຄ້າໄດ້ອ່ານ, ເຂົ້າໃຈ, ຮັບຮູ້ ແລະ ຍອມປະຕິບັດ ໃຫ້ຖືກຕ້ອງທຸກປະການ. ບັນດາເອກະສານດັ່ງກ່າວມີຜົນບັງຄັບໃຊ້ ນັບຕັ້ງແຕ່ມື້ ລູກຄ້າໃຫ້ຂໍ້ມູນ, ເຊັນຊື່ ແລະ ປະທັບກາໃນແບບຟອມລົງທະບຽນຂໍນຳໃຊ້ SMS Banking ເປັນຕົ້ນໄປ.

**ພະນັກງານ ທຄຕລ** | **ລາຍເຊັນເຈົ້າຂອງບັນຊີ**

## ລາຍການ ອັດຕາຄ່າບໍລິການຜະລິດຕະພັນ SMS Banking ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

| ລ/ດ | ລາຍການຄ່າບໍລິການ | ອັດຕາຄ່າບໍລິການ |
|---|---|---|
| 1 | ສະໝັກລົງທະບຽນນຳໃຊ້ | ບໍ່ເກັບ |
| 2 | ຄ່າທຳນຽມລາຍເດືອນ (ບໍ່ເກີນ 300 ລາຍການ) | 10.000 ກີບ/ເບີໂທລະສັບ/ບັນຊີ/ເດືອນ |
| 3 | Package ສົ່ງຂໍ້ຄວາມແຈ້ງເຕືອນເພີ່ມ | |
| | 30 ລາຍການ | 5.000 ກີບ/ເບີໂທລະສັບ/ບັນຊີ/ເດືອນ |
| | 60 ລາຍການ | 10.000 ກີບ/ເບີໂທລະສັບ/ບັນຊີ/ເດືອນ |
| | 150 ລາຍການ | 25.000 ກີບ/ເບີໂທລະສັບ/ບັນຊີ/ເດືອນ |
| | 300 ລາຍການ | 50.000 ກີບ/ເບີໂທລະສັບ/ບັນຊີ/ເດືອນ |
| | 600 ລາຍການ | 100.000 ກີບ/ເບີໂທລະສັບ/ບັນຊີ/ເດືອນ |
| 4 | ສົ່ງອັດຕາແລກປ່ຽນປະຈຳວັນ | 5.000 ກີບ/ເບີໂທລະສັບ/ເດືອນ |
| 5 | ເປີດນຳໃຊ້ຄືນ (ຄ້າງຄ່າທຳນຽມເກີນ 3 ເດືອນ ແລະ ຖືກງົດການນຳໃຊ້ຊົ່ວຄາວ) | ບໍ່ເກັບ, ແຕ່ຕ້ອງໄດ້ຊຳລະຄ່າທຳນຽມທີ່ຄ້າງຊຳລະ |

ໝາຍເຫດ: ທະນາຄານສະຫງວນສິດໃນການປ່ຽນແປງຄ່າທຳນຽມໂດຍບໍ່ຕ້ອງແຈ້ງລ່ວງໜ້າ

ເລກທີ: ........................

.................. ວັນທີ ..../..../........

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------===000===-----

# ໃບມອບສິດ

ຮຽນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລື່ອງ: ມອບສິດໃຫ້ຜູ້ຕາງໜ້າມາພົວພັນກ່ຽວກັບຜະລິດຕະພັນ SMS Banking.

ຂ້າພະເຈົ້າ ຊື່ ແລະ ນາມສະກຸນ: ..........................................................................

ບ່ອນເຮັດວຽກ: ..........................................................................

ເບີໂທລະສັບ: ........................................ ອີເມລ໌: ........................................

ເປັນເຈົ້າຂອງບັນຊີເລກທີ: ........................................................................

ຊື່ບັນຊີ: ..........................................................................

ໄດ້ມອບສິດໃຫ້ແກ່ ທ້າວ/ນາງ (ຊື່ ແລະ ນາມສະກຸນ): ..........................................................

ປະຈຸບັນຢູ່ບ້ານ: ....................... ເມືອງ: .................................. ແຂວງ: ......................

ບັດປະຈຳຕົວ/ ສຳມະໂນຄົວ / ໜັງສືເດີນທາງ ເລກທີ: ............................. ເບີໂທລະສັບ: .......................

**ມີຈຸດປະສົງເພື່ອໃຫ້ຜູ້ກ່ຽວມາພົວພັນແທນຂ້າພະເຈົ້າກ່ຽວກັບ: ☐ ລົງທະບຽນນຳໃຊ້ ☐ ປ່ຽນແປງຂໍ້ມູນ**

ຈຸດປະສົງອື່ນໆ: ..........................................................................

ຂ້າພະເຈົ້າ ຂໍຢັ້ງຢືນວ່າ ຜູ້ກ່ຽວແມ່ນຜູ້ຕາງໜ້າທີ່ໄດ້ຮັບການມອບໝາຍຈາກຂ້າພະເຈົ້າແທ້. ກໍລະນີທີ່ໄດ້ດຳເນີນການໃຫ້ແລ້ວ, ຖ້າເກີດມີບັນຫາຕິດພັນກັບການມອບສິດຄັ້ງນີ້ ຂ້າພະເຈົ້າ ຂໍຮັບຜິດຊອບຕາມລະບຽບທຸກປະການ. ໃບມອບສິດສະບັບນີ້ມີຜົນສັກສິດ 07 (ເຈັດ) ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈິ່ງໄດ້ເຮັດໃບມອບສິດໃຫ້ຜູ້ກ່ຽວໄວ້ເພື່ອເປັນຫຼັກຖານ ແລະ ຫວັງວ່າທ່ານ ຈະອຳນວຍຄວາມສະດວກໃຫ້ຜູ້ກ່ຽວດ້ວຍ.

| **ລາຍເຊັນຜູ້ຮັບສິດ** | **ລາຍເຊັນຜູ້ມອບສິດ** |
|---|---|

**ເອກະສານທີ່ຕ້ອງປະກອບ:**

- ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືເດີນທາງ ຂອງທັງສອງຝ່າຍ.

**ໝາຍເຫດ:**

- ຖ້າລາຍເຊັນໃນບັນຊີຫາກເກີນໜຶ່ງລາຍເຊັນ ຕ້ອງໄດ້ເຊັນຮັບຮູ້ຮ່ວມກັນທັງໝົດຕາມເງື່ອນໄຂຂອງລາຍເຊັນທີ່ໄດ້ລະບຸໄວ້ໃນບັນຊີດັ່ງກ່າວ.
- ໃບມອບສິດສະບັບນີ້ໃຊ້ໄດ້ພຽງຄັ້ງດຽວ.